住まいのルールブック（ラオス語版）

KJK

ບໍລິສັດຈັດຫາເຮືອນຢູ່ຂອງແຂວງຄານາກະວາ

ພາສາລາວ

# ກົດລະບຽບຂອງເຮືອນຢູ່



# ຍິນດີຕ້ອນຮັບສູ່ການເຊົ່າເຮືອນຂອງບໍລິສັດມະຫາຊົນ ！

ພວກເຮົາຕ້ອງການແຈ້ງໃຫ້ທ່ານຮູ້ກ່ຽວກັບກົດລະບຽບ ແລະລັກສະນະທີ່ພວກເຮົາຢາກໃຫ້ທ່ານປະຕິບັດຕາມ, ເພື່ອໃຫ້ທ່ານສາມາດດຳລົງຊີວິດຢູ່ຢ່າງສະດວກສະບາຍໃນທີ່ຢູ່ອາໄສຂອງພວກເຮົາ.

# ເຂົ້າໄປຢູ່ເຮືອນແລ້ວ

## 1 ກະລຸນາເຂົ້າຮ່ວມກັບ ສະມາຄົມຊຸມຊົນ

(ສະມາຄົມຊຸມຊົນ) ແມ່ນອົງການຈັດຕັ້ງຂອງປວງຊົນ. ຫຼັງຈາກຍ້າຍເຂົ້າໄປຢູ່ເຮືອນແລ້ວ, ໃຫ້ໄປຖາມສະບາຍຜູ້ຢູ່ຂ້າງຄຽງ, ເມື່ອທ່ານມີບັນຫາຕ່າງໆສະມາຄົມຊຸມຊົນຈະຍື່ນມືເຂົ້າມາຊ່ວຍ.
※ບາງດັ້ນຈິບໍ່ມີສະມາຄົມຊຸມຊົນ.

### ສະມາຄົມຊຸມຊົນ ມີກິດຈະກຳປະເພດໃດແດ່ ?

-ກໍລະນີເກີດໄພພິບັດ ແຜ່ນດິນໄຫວ ຫຼື ໄຟໄໝ້, ພວກເຮົາຈະແຈກຢາຍເຄື່ອງໃຊ້ນ້ຳແລະອາຫານ.
-ຄະນະສະມຄົມມີໜ້າທີ່ຈັດບ່ອນມ້ຽນຣົດຖີບແລະຣົດຈັກໃຫ້ເປັນລະບຽບ.
-ເວລາທຸກໆທ່ານມີບັນຫາ,ຄະນະສະມາຄົມຈະຕິດຕໍ່ຫາດັນຈິແລະປຶກສາຫາລືຊ່ວຍ.
-ຄະນະສະມາຄົມຈະພາຈັດງານຕ່າງໆກັບຜູ້ອາໃສຢູ່ໃນດັນຈິແຫ່ງນີ້.







## 2 ກ່ຽວກັບການຖາມສະບາຍປະຈຳວັນ

ຖ້າພົບຄົນຢູ່ໃນດັນຈິແລ້ວ, ຈະບໍ່ຖາມທັກທາຍແດ່ບໍ? ຂໍໃຫ້ພົວພັນສົນທະນາກັນຈະເປັນການດີ.



# ກົດລະບຽບການດໍາລົງຊີວິດ ①ການຖິ້ມຂີ້ເຫຍື້ອ

ຢູ່ໃນດັນຈິມີກົດລະບຽບຖິ້ມຂີ້ເຫຍື້ອ, ແລະຢູ່ແຕ່ລະບ່ອນກໍ່ມີກົດລະບຽບ ແຕກຕ່າງກັນ. ຂໍໃຫ້ປະຕິບັດຕາມກົດລະບຽບເພື່ອໃຫ້ໝົດທຸກຄົນຢູ່ໃນດັນຈິ ສະບາຍໃຈ.

## 1 ສະໜິດຂອງຂີ້ເຫຍື້ອ

ທ່ານສາມາດ ຖິ້ມຂີ້ເຫຍື້ອ ຕໍ່ໄປນີ້ ໃສ່ບ່ອນເກັບຂີ້ເຫຍື້ອ ໃນອາຄານ ທີ່ ຢູ່ອາໄສ.

**ຂີ້ເຫຍື້ອຈູດໄດ້**



**ຂີ້ເຫຍື້ອຈູດບໍ່ໄດ້**




**ແກ້ວ, ກະປ໋ອງ**




**ຂອດປະລັດສະຕິກ**




**ຖ່ານໄຟສາຍ ທີ່ໃຊ້ແລ້ວ**



**ໂລຫະຕ່າງໆ**



## 2 ວິທີຖິ້ມຂີ້ເຫຍື້ອ

ມື້ຖິ້ມຂີ້ເຫຍື້ອແຕ່ລະສະໜິດແລະແຕ່ລະຄຸ້ມເຂດມື້ຖິ້ມຕ່າງກັນ. ທ່ານສາມາດຂໍປື້ມຖິ້ມຂີ້ເຫຍື້ອນໍາໂຮງການເມືອງ ຫຼື ຢູ່ໃນເວັບໄຊທ໌ໄດ້, ແລະກ່ອນຈະຍ້າຍໜີຂໍໃຫ້ກວດກາເບິ່ງດີໆດ້ວຍ.





ຕົວຢ່າງວັດສະດຸທີ່ແຈກຢາຍໂດຍເມືອງ ໂຢໂກຮາມ່າ

## 3 ການແຍກຂີ້ເຫຍື້ອ

ກະລຸນາແຍກຂີ້ເຫຍື້ອ, ຕາມປະເພດແລ້ວ, ຈຶ່ງເອົາໄປຖິ້ມ. ຖ້າວ່າ: ບໍ່ແຍກປະເພດຖິ້ມບໍ່ຖືກມື້ຈະບໍ່ເອົາຂີ້ເຫຍື້ອຖົງນັ້ນໄປຖິ້ມ. ຖ້າວ່າ: ຂີ້ເຫຍື້ອຍັງຄ້າງຢູ່, ກາ ຈະມາເຈາະກິນ, ຈະເຮັດໃຫ້ມີກິ່ນເໝັນ. ຂໍຄວາມຮ່ວມມືແຍກຂີ້ເຫຍື້ອເພື່ອໃຫ້ໝົດທຸກໆຄົນດໍາລົງຊີວິດຢູ່ຢ່າງສະບາຍໃຈ.



## 4 ວິທີຖິ້ມຂີ້ເຫຍື້ອໃຫຍ່

ເຄື່ອງເຮືອນສະໜິດໃຫຍ່ໆ, ເອີ້ນວ່າ(ຂີ້ເຫຍື້ອໃຫຍ່)ກ່ອນຈະຖິ້ມຂີ້ເຫຍື້ອໃຫຍ່ຕ້ອງໂທຕິດຕໍ່ຈັບຈອງລ່ວງໜ້າ. ໂທຈັບຈອງໄດ້ແລ້ວກໍ່ຕາມ, ຖ້າວ່າ: ບໍ່ຈ່າຍຄ່າຖິ້ມ ກໍ່ຈະບໍ່ເອົາໄປຖິ້ມ.ງານຈັບຈອງ ຖິ້ມຂີ້ເຫຍື້ອໃຫຍ່, ແຕ່ລະເຂດແຕກຕ່າງກັນ, ຖາມນໍາໂຮງການເມືອງ ຫຼື ໃຫ້ກອດເບິ່ງປື້ມຖິ້ມຂີ້ເຫຍື້ອ.



## ເວລາບໍ່ເຂົ້າໃຈນັ້ນ

ຖ້າວ່າ: ຢາກຖາມກ່ຽວກັບວິທີຖິ້ມຂີ້ເຫຍື້ອ ແລະ ວິທີແຍກຂີ້ເຫຍື້ອ,ຖາມຄົນຢູ່ໃນດັນຈິ ຫຼື ຖາມສະມາຄົມຊຸມຊົນ ຫຼື ຖາມນໍາຫ້ອງການຄຸ້ມຄອງ.





# ກົດລະບຽບການຢູ່ດັນຈິ ②ກ່ຽວກັບສຽງດັງ

ສຽງດັງຢູ່ໃນດັນຈິ ຈະດັງໄປຫ້ອງຂ້າງຄຽງ ທາງເທິງ ແລະທາງລຸ່ມໄດ້ຢ່າງງ່າຍໆ, ເມື່ອເປັນດັ່ງນັ້ນ, ຂໍໃຫ້ໃຊ້ຊີວິດຢູ່ດ້ວຍຄວາມລະມັດລະວັງ.

### ກາງຄືນຕ້ອງມິດງຽບ



### ຢ່າ ທຶບພື້ນເຮືອນ ຫຼື ຕີຝາເຮືອນ



ຢ່າໃຫ້ລູກໂດດລົງພື້ນເຮືອນ ແລະໂຍນບານລົງພື້ນເຮືອນ

### ຢູ່ໃນຫ້ອງ ລົມກັນໃຫ້ຄ່ອຍໆ



ມີໝູ່ມາຫຼິ້ນນໍາ ເຮັດປາຕີ້, ຂໍໃຫ້ລົມກັນຄ່ອຍໆ

### ຢ່າ ເປີດສຽງໂທລະພາບ ຫຼື ເຄື່ອງສຽງແຮງ



ຕອນເຊົ້າໆ ຫຼື ກາງຄືນ ຫ້າມຊັກເຄື່ອງ ຫຼື ຫ້າມໃຊ້ເຄື່ອງດູດຝຸ່ນ.

### ຖ້າຄິດວ່າ: ຈະມີສຽງດັງ ຫຼື ຈະຟົດແຊວ ໃຫ້ບອກຄົນຂ້າງເຮືອນລ່ວງໜ້າໄວ້

ມີຄອບຄົວໝູ່ເພື່ອນຈະມາຫຼິ້ນນໍາ, ຄາດວ່າ: ຈະຟົດແຊວ ໃຫ້ບອກຜູ້ຢູ່ທາງເທິງ ທາງລຸ່ມ ແລະ ຫ້ອງຂ້າງຄຽງໄວ້ວ່າ: (ໝູ່ຄູ່ຈະມາຫຼິ້ນນໍາ ບາງເທື່ອອາດຈະຟົດແຊວ). ໄປບອກໄວ້ຈະເປັນການດີ, ເພື່ອປ້ອງກັນບໍ່ໃຫ້ເກີດຜິດຖຽງກັນ.



## ກົດລະບຽບການດຳລົງຊີວິດ ②ກ່ຽວກັບຫ້ອງອາບນ້ຳ ແລະຫ້ອງຖ່າຍ

ຮັກສາຫ້ອງນ້ຳ ແລະທໍ່ລະບາຍນ້ຳໃຫ້ສະອາດຢູ່ສະເໝີ, ທໍ່ລະບາຍນ້ຳຫ້ອງຂອງເຈົ້າຈະເຊື່ອມຕໍ່ກັບຫ້ອງອື່ນໆ. ຖ້າວ່າ: ທໍ່ລະບາຍນ້ຳເຈົ້າຕັນນ້ຳຈະໄຫລໄປຫາຫ້ອງອື່ນ, ເຈົ້າຕ້ອງບຜິດຊອບ ແລະອີກເລື້ອງນຶ່ງນອກຈາກເຈັ້ຍຫ້ອງນ້ຳແລ້ວ, ເຈັ້ຍອື່ນໆຫ້າມຖິ້ມລົງໃນໜົວສ້ວມຖ່າຍ.





### ກໍລະນີເກີດໄດ້ໃຊ້,ໄດ້ຮັບຜິດຊອບ…

ຂໍແນະນຳທ່ານ ໃຫ້ເຊົ້າປະກັນໄພ (ປະກັນຮັບຜິດຊອບສ່ວນບຸກຄົນ) ເພື່ອປ້ອງກັນເຮັດຄວາມເສັຍຫາຍໃຫ້ແກ່ຄົນອື່ນ. ປະກັນໄພຮັບຜິດຊອບສ່ວນບຸກຄົນນັ້ນ, ຈະຕິດມາກັບປະກັນໄພຣົດຍົນ. ລາຍລະອຽດ ສອບຖາມ ຫຼື ປຶກສາ ກັບບໍລິສັດປະກັນໄພໄດ້.

## ກົດລະບຽບການດຳລົງຊີວິດ ④ບ່ອນທາງຍ່າງ ແລະລະບຽງ (ຫຼື ພື້ນທີ່ທົ່ວໄປ)

ບ່ອນທາງຍ່າງໜ້າປະຕູຫ້ອງ ແລະລະບຽງບໍ່ແມ່ນບ່ອນຢູ່ອາໄສ, ເອີ້ນວ່າ: (ພື້ນ ທີ່ ທົ່ວ ໄປ) ບໍ່ມີສິດຄອບຄອງເປັນຂອງໂຕເອງ. ບ່ອນທາງຍ່າງ ແລະລະບຽງເປັນທາງຜ່ານ ເວລາເກີດໄຟໃໝ້ ຫຼື ເກີດໄພພິບັດຕ່າງໆ. ສະນັ້ນ, ຫ້າມບໍ່ໃຫ້ເອົາເຄື່ອງຂອງຕ່າງໆໄປວາງຕັນ. ອີກຢ່າງນຶ່ງບາງຄົນບໍ່ມັກກິນຢາສູບ, ຫ້າມບໍ່ໃຫສູບຢາ ຢູ່ໜ້າປະຕູຫ້ອງ, ແລະຢູ່ລະບຽງນອກຫ້ອງ ຫຼື ບ່ອນອື່ນໆ.





## ກົດລະບຽບການດຳລົງຊີວິດ ⑤ກ່ຽວກັບການໃຊ້ບ່ອນມ້ຽນຣົດ

ຖ້າມີຣົດຖີບ ຫຼື ຣົດຈັກ ຈະເອົາໄວ້ບ່ອນມ້ຽນຣົດ, ໃຫ້ຖາມສະມາຄົມດັນຈິ ກ່ອນ. ຖ້າວ່າ: ບໍ່ມີສະມາຄົມ, ໃຫ້ຖາມບໍລິສັດຄຸ້ມຄອງດັນຈິ.



## ກົດລະບຽບການຢູ່ດັນຈິ ⑥ບຫ້າບໍ່ໃຫ້ເອົາຄົນອື່ນມາຢູ່ນຳ

ຕາມກົດລະບຽບ ຂອງຈຳນວນຄົນຢູ່ດັນຈິ ຈະຢູ່ໄດ້ສະເພາະຜູ້ມີຊື່: ເວລາຂຽນຄຳຮ້ອງຂໍ ດັນຈິ ເທົ່ານັ້ນ, ຫ້າມບໍ່ໃຫ້ເອົາໝູ່ ຫຼື ຄອບຄົວອື່ນມາຢູ່ນຳ. ຖ້າວ່າ: ຢາກເອົາມາຢູ່ນຳ ຕ້ອງຍື່ນຄຳຮ້ອງ ຫຼື ໂທລະສັບ ຫາຫ້ອງການຄຸ້ມຄອງດັນຈິ.

( ຫ້ອງການຄຸ້ມຄອງບໍລິຫານດັນຈິ, ເບີໂທ : 045 − 651 − 1864 )

## ກົດລະບຽບການດຳລົງຊີວິດ ⑦ຫ້າມລ້ຽງໝາ ແລະ ແມວຢູ່ໃນດັນຈິ

-ເຮືອນ ດັນຈິ ຫ້າມບໍ່ໃຫ້ເອົາ ໝາ - ແມວ ມາລ້ຽງຢູ່ໃນຫ້ອງເຮືອນ.
-ຖ້າວ່າ: ພົບເຫັນສັດລ້ຽງ ຈະໃຫ້ອອກຈາກ ດັນຈິ.



## ການຂໍຮ້ອງເວລາຈະອອກຈາກດັນຈິ ຫຼື ຈະຍົກຍ້າຍ

ຈະອອກໜີຈາກ ດັນຈິ ຫຼື ຈະຍົກຍ້າຍອອກ ຕ້ອງແຈ້ງບອກລ່ວງໜ້າ. ຖ້າວ່າ:ຮູ້ມື້ຈະຍ້າອອກ ຢ່າງແນ່ນອນແລ້ວ, ກ່ອນອື່ນໃຫ້ບອກຫ້ອງການຄຸ້ມຄອງ. ແລ້ວຈະສົ່ງເອກກະສານອັນຈຳເປັນ ມາໃຫ້ ທາງໄປສະນີ. ຫຼັງຈາກນັ້ນ, ໃຫ້ປະຕິບັດຕາມຄຳແນະນຳ ຂອງຫ້ອງການຄຸ້ມຄອງ ດັນຈິ ຈົນກວ່າຈະໄດ້ສົ່ງກະແຈຫ້ອງ.





# ຫ້ອງການຄຸ້ມຄອງດັນຈິ

ເວລາມີຄວາມຫຍຸ້ງຍາກຢາກຕິດຕໍ່ຫາ, ໃຫ້ຂຽນຂໍ້ຄວາມວາງໄວ້ເທິງອ່າງລ້າງຖ້ວຍ ຫຼື ຂຽນໃສ່ແຜ່ນແມ່ເຫຼັກຕິດໄວ້.

| ດັນຈິ ທີ່ ທ່ານອາໃສຢູ່ | ບ່ອນຕິດຕໍ່ |
|---|---|
| ﾌﾛｰﾙ元住吉　川崎下麻生　竹山<br>ﾌﾛｰﾙ梶が谷　ﾋﾙｽﾞ千草台　白根<br>ﾌﾛｰﾙ横浜山手　ﾌﾛｰﾙ新川崎　東本郷<br>ﾌﾛｰﾙ川崎戸手　ﾌﾛｰﾙ山田町　上白根<br>ﾙﾘｴ横浜長者町　ﾌﾛｰﾙ横濱関内　大里町<br>ﾌﾛｰﾙ横浜入江町　ﾙﾘｴ横浜宮川町　川島町<br>ﾌﾛｰﾙ川崎下平間　ｱﾝﾚｰﾍﾞ横浜星川　上作延<br>ﾌﾛｰﾙ川崎古市場　横浜鶴見共同ビル　南平台<br>ﾌﾛｰﾙ川崎中幸町　横浜六角橋共同ビル　不動が丘<br>ﾌﾛｰﾙ横浜三ツ沢　横浜二ツ谷共同ビル | かながわ土地建物保全協会<br>横浜北サービスセンター<br>TEL：045-933-0593<br>（平日8：30～17：30） |
| ﾌﾛｰﾙ横浜井土ヶ谷　不入斗　浦賀<br>東逗子駅前共同ビル　上郷西ケ谷　汐見台<br>横浜中原第２共同ビル　ﾌﾛｰﾙ新杉田　上郷台 | かながわ土地建物保全協会<br>横浜南サービスセンター<br>TEL：045-778-4425<br>（平日8：30～17：30） |
| 藤沢湘南台　藤沢西部　戸塚深谷　上土棚<br>ﾚｼﾞｪ戸塚深谷　藤沢四ツ辻　藤沢円行　辻堂海岸 | かながわ土地建物保全協会<br>湘南サービスセンター<br>TEL：0466-43-7731<br>（平日8：30～17：30） |
| 相模原高根　座間東原　春日台　相武台<br>綾瀬寺尾本町　大和大塚戸　大和第２　下九沢<br>大和東共同ビル　相模原田名　中津桜台　緑ヶ丘 | かながわ土地建物保全協会<br>県央サービスセンター<br>TEL：046-251-2901<br>（平日8：30～17：30） |
| 小田原酒匂　伊勢原　二宮<br>ｺﾝｾｰﾙ小田原東町　小田原橋　湯河原<br>ｺﾝｾｰﾙ小田原中町　伊勢原池端　平塚田村 | かながわ土地建物保全協会<br>西湘サービスセンター<br>TEL：0463-71-1839<br>（平日8：30～17：30） |
| 横浜若葉台 | 若葉台まちづくりセンター<br>TEL：045-921-3361<br>（8：30～17：30）<br>水曜日・祝日は定休 |



令和6年5月改訂